**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງພາຍໃນ

ຄະນະຮັບຜິດຊອບສ້າງ ກົດໝາຍວ່າດ້ວຍການປົກຄອງ ເລກທີ **02** /ຄປຄ

ນະຄອນຫຼວງວຽງຈັນ, ວັນທີ **22** ມັງກອນ **2021**

# ບົດປະເມີນຜົນກະທົບຂອງ<br>"ຮ່າງ" ກົດໝາຍວ່າດ້ວຍການປົກຄອງ

- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ **19/ສພຊ**, ລົງວັນທີ **12** ກໍລະກົດ **2012**;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ **421/ຫສນຍ**, ລົງວັນທີ **30** ມີນາ **2020**;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສ້າງກົດໝາຍວ່າດ້ວຍການປົກຄອງ ສະບັບເລກທີ **1304/ພນ**, ລົງວັນທີ **30** ພະຈິກ **2020**.

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1. ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ / ອົງການ: **ກະຊວງພາຍໃນ**

ຊື່ກົມ / ພະແນກ: **ກົມພັດທະນາການບໍລິຫານລັດ (ພະແນກພັດທະນາລະບຽບການບໍລິຫານ ແລະ ນິຕິກຳ)**

ຊື່ ແລະ ຕຳແໜ່ງ ຂອງ ພະນັກງານ-ລັດຖະກອນທີ່ຮັບຜິດຊອບຄົ້ນຄວ້າ:

| | |
|---|---|
| **1)** ທ່ານ ນິສິດ ແກ້ວປັນຍາ ຫົວໜ້າກົມ | **(020) 5758 2888** |
| **2)** ທ່ານ ທອງສະຫວັນ ປັນຍາວິຈິດ ຮອງຫົວໜ້າກົມ | **(020) 5538 4342** |
| **3)** ທ່ານ ແສງອາລຸນ ຍົດລືໄຊ ຮອງຫົວໜ້າກົມ | **(020) 5963 6399** |
| **4)** ທ່ານ ລັງສິດ ຖານະສຸກ ຫົວໜ້າພະແນກ | **(020) 5524 1249** |
| **5)** ທ່ານ ວິທະຍາກອນ ພົມມະວົງ ວິຊາການ | **(020) 5628 3545** |
| E-mail (ຈົດໝາຍເອເລັກໂຕຣນິກ): | Laosith@gmail.com |

### 1.2. ຊື່ນິຕິກຳ

ຊື່ຮ່າງນິຕິກຳ: **ກົດໝາຍ ວ່າດ້ວຍການປົກຄອງ**

ຮ່າງນິຕິກຳແມ່ນສະບັບ: ☑ ໃໝ່ ☐ ປັບປຸງ

### 1.3. ກຳນົດເວລາໃນການຄົ້ນຄວ້າສ້າງກົດໝາຍ

1. ຈັດກອງປະຊຸມຜ່ານເນື້ອໃນບົດສະເໜີເຫດຜົນ ແລະ ຄວາມຈຳເປັນ ໃນການສ້າງກົດໝາຍວ່າດ້ວຍການປົກຄອງ ໃນວັນທີ **07 ສິງຫາ 2020** (ສະບັບເລກທີ **01**/ພນ, ລົງວັນທີ **13** ສິງຫາ **2020**);

ຕູ້ ປ.ນ 6376 (ຄຸ້ມ ສ.ນ.ຍ) ພະແນກພັດທະນາລະບຽບການບໍລິຫານແລະນິຕິກຳ ກົມພັດທະນາການບໍລິຫານລັດ ກະຊວງພາຍໃນ
ໂທລະສັບ: **(021) 212 545**; Fax of DPAD: **(021) 217 856**; e-mail: Laosith@gmail.com; Homepage: www.moha.gov.la

2. ຈັດກອງປະຊຸມສໍາມະນາກ່ຽວກັບກົດໝາຍປົກຄອງ ໃນວັນທີ 30 **ພະຈິກ - 01 ທັນວາ 2020** ທີ່ໂຮງແຮມດອນຈັນ ພາເລຊ ນະຄອນຫຼວງວຽງຈັນ ກັບຊ່ຽວຊານ ຣາຊະອານາຈັກໄທ ຜ່ານທາງໄກ (ລະບົບ VDO Conference ຫຼື Webinar);
3. ຈັດກອງປະຊຸມປຶກສາຫາລື ກ່ຽວກັບເນື້ອໃນ ຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ແລະ ບົດປະເມີນຜົນກະທົບຂອງ "ຮ່າງ" ກົດໝາຍ ໃນວັນທີ **26-27 ມັງກອນ 2021** ທີ່ໂຮງແຮມແກຣນດ໌ ຣິເວີໄຊ ເມືອງວັງວຽງ ແຂວງວຽງຈັນ;
4. ກອງປະຊຸມຄະນະຄົ້ນຄວ້າ ຂັ້ນວິຊາການ ເພື່ອຮຽບຮຽງເນື້ອໃນຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ໃນວັນທີ **15-17 ກຸມພາ 2021** ທີ່ນະຄອນຫຼວງພະບາງ **(ສັງລວມເປັນສະບັບ "ຮ່າງ" ທີ 1)**;
5. ກອງປະຊຸມຄະນະຄົ້ນຄວ້າ ຂັ້ນວິຊາການ ຮ່ວມກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອພິຈາລະນາເນື້ອໃນຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ແລະ ບົດສະເໜີຕ່າງໆ ໃນເດືອນ **ມີນາ-ເມສາ 2021** ສືບຕໍ່ຈັດກອງປະຊຸມສໍາມະນາ ທີ່ແຂວງຄໍາມ່ວນ (ເມືອງທ່າແຂກ) ແລະ ແຂວງຈໍາປາສັກ (ນະຄອນປາກເຊ);
6. ກອງປະຊຸມຄະນະຄົ້ນຄວ້າ ເພື່ອຮຽບຮຽງເນື້ອໃນຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ໃນເດືອນ **ພຶດສະພາ-ມິຖຸນາ 2021 (ປັບປຸງ ແລ້ວສັງລວມເປັນ "ຮ່າງ" ສະບັບທີ 2)**;
7. ຈັດກອງປະຊຸມສໍາມະນາວິທະຍາສາດ ໃຫ້ພະນັກງານ-ລັດຖະກອນຂອງກະ ຊວງພາຍໃນ ແລະ ປະຊຸມຮ່ວມກັບບັນດາອົງການຈັດຕັ້ງຂອງພັກ, ກອງປະຊຸມຄະນະຄົ້ນຄວ້າ, ປຶກສາຫາລືກ່ຽວກັບເນື້ອໃນຂອງ "ຮ່າງ" ກົດໝາຍ **ເດືອນມິຖຸນາ - ກໍລະກົດ 2021 (ສັງລວມເປັນ ສະບັບ "ຮ່າງ" ທີ 3)**;
8. ກອງປະຊຸມທາບທາມ 03 ພາກ (ເໜືອ-ກາງ-ໃຕ້) ໃນລະຫວ່າງເດືອນ **ກໍລະກົດ - ສິງຫາ 2021**;
9. ກອງປະຊຸມຄະນະຄົ້ນຄວ້າ, ປຶກສາຫາລືກ່ຽວກັບເນື້ອໃນກົດໝາຍ **ເດືອນກັນຍາ - ຕຸລາ 2021 (ສັງລວມເປັນ ສະບັບ "ຮ່າງ" ທີ 4)**;
10. ເຮັດວຽກຮ່ວມກັບ ກະຊວງຍຸຕິທໍາ ເພື່ອກວດກາຄວາມສອດຄ່ອງ ຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ [ແລະ] ຄະນະປະຈໍາສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ, ກໍາມາທິການກົດໝາຍ ແລະ ກໍາມາທິການອື່ນໆ ຂອງ ສະພາແຫ່ງຊາດ ຊຸດທີ IX ເພື່ອກວດກາຄວາມພ້ອມຮອບດ້ານຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ໃນລະຫວ່າງເດືອນ **ຕຸລາ - ທັນວາ 2021**;
11. ກອງປະຊຸມຄະນະຄົ້ນຄວ້າ, ປຶກສາຫາລືກ່ຽວກັບເນື້ອໃນກົດໝາຍ **ເດືອນພະຈິກ - ທັນວາ 2021 (ສັງລວມເປັນ ສະບັບ "ຮ່າງ" ທີ 5)**;
12. ນໍາເອົາ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ເຂົ້າຜ່ານກອງປະຊຸມລັດຖະບານ ໃນລະຫວ່າງເດືອນ **ມັງກອນ - ມີນາ 2022**;
13. ໃນລະຫວ່າງເດືອນ **ມີນາ - ມິຖຸນາ 2022** ຮ່ວມປະຊຸມກັບຄະນະປະຈໍາສະພາແຫ່ງຊາດ ເພື່ອກວດຄືນທາງດ້ານເນື້ອໃນ ແລະ ກະກຽມການເອົາ "ຮ່າງ" ກົດໝາຍ ເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ;
14. ນໍາເອົາ "ຮ່າງ" ກົດໝາຍ ເຂົ້າຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງ ສະພາແຫ່ງຊາດ ຊຸດທີ IX ເພື່ອຮັບຮອງ ແລະ ສະເໜີປະທານປະເທດ ປະກາດໃຊ້ ໃນລະຫວ່າງເດືອນ **ຕຸລາ - ທັນວາ 2022**. ຫຼັງຈາກນັ້ນ, ຈຶ່ງວາງແຜນການໂຄສະນາເຜີຍແຜ່ ແລະ ແນະນໍາຈັດຕັ້ງ-ຜັນຂະຫຍາຍກົດໝາຍ.

## 2. ບັນຫາ ແລະ ຈຸດປະສົງ

### 2.1. ບັນຫາ

**ກ. ສະພາບການທີ່ຜ່ານມາ**

ນັບແຕ່ປະເທດຊາດໄດ້ຮັບການສະຖາປະນາ ເປັນລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 02 ທັນວາ 1975 ເປັນຕົ້ນມາ, ພັກ ແລະ ລັດ ແຫ່ງ ສ.ປ.ປ. ລາວ ກໍ່ໄດ້

ສຸມທຸກຄວາມພະຍາຍາມສ້າງ ສ.ປ.ປ. ລາວ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ ເທື່ອລະກ້າວ, ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດ ຂອງປະຊາຊົນ ຢ່າງແທ້ຈິງ ໂດຍໄດ້ພັດທະນາກົດໝາຍ ເວົ້າລວມ, ເວົ້າສະເພາະແມ່ນກົດໝາຍປົກຄອງ ຢ່າງເປັນລະບົບ, ເປັນຫຼັກການຮັບປະກັນໃຫ້ການປົກຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ (ມາດຕາ **10** ຂອງລັດຖະທຳມະນູນ ແຫ່ງ ສ.ປ.ປ. ລາວ) ຢູ່ປະເທດເຮົາຢ່າງສັກສິດ, ເຮັດໃຫ້ສັງຄົມ ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ.

ສ.ປ.ປ. ລາວ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການພັດທະນາກົດໝາຍ ໂດຍສະເພາະ ພາຍຫຼັງທີ່ພັກເຮົາ ໄດ້ດຳເນີນແນວທາງປ່ຽນແປງໃໝ່ເລີ່ມແຕ່ປີ **1986** ເປັນຕົ້ນມາ ໂດຍໄດ້ປະກາດໃຊ້ລັດຖະທຳມະນູນສະບັບທຳອິດ ໃນປີ **1991**, ເປັນຂີດໝາຍໃຫ້ແກ່ການເລີ່ມຕົ້ນພັດທະນາລະບົບກົດໝາຍ ຂອງ ສ.ປ.ປ. ລາວ ເປັນລະບົບຄົບຊຸດເປັນກ້າວໆ. ມາຮອດປັດຈຸບັນ ສ.ປ.ປ. ລາວ ໄດ້ຮັບຮອງເອົາກົດໝາຍ **150** ກວ່າສະບັບ ໂດຍອີງໃສ່ສະພາບຈຸດພິເສດທາງດ້ານສັງຄົມຂອງປະເທດຊາດ, ໜ້າທີ່ການເມືອງຂອງການປະຕິວັດ ໃນໄລຍະໃໝ່ ແລະ ບົດຮຽນຈາກພຶດຕິກຳຂອງການຄຸ້ມຄອງລັດໃນແຕ່ລະໄລຍະ. ພ້ອມກັນນັ້ນ, ກໍ່ໄດ້ຍາດແຍ່ງ ແລະ ເລືອກເຟັ້ນເອົາບົດຮຽນທີ່ດີ, ສອດຄ່ອງຂອງຕ່າງປະເທດ ແລະ ສາກົນ ມາພັດທະນາລະບົບກົດໝາຍຂອງຕົນຢ່າງໄດ້ຮັບຜົນດີ.

ບັນດາກົດໝາຍໃນ ສ.ປ.ປ. ລາວ ມີ **150** ກວ່າສະບັບ ໃນນັ້ນມີກົດໝາຍຂົງເຂດການປົກຄອງ **90** ກວ່າສະບັບ ທີ່ເປັນພື້ນຖານອັນສຳຄັນໃຫ້ການປົກຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນລະບົບ-ລະບຽບຖືກຕ້ອງ ຕາມກົດໝາຍ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ, ເສດຖະກິດ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ການແກ້ໄຂຂໍ້ຂັດແຍ່ງ ຮັບປະກັນໄດ້ຄວາມຖືກຕ້ອງເປັນທຳຫຼາຍຂຶ້ນໃນທົ່ວສັງຄົມ ເປັນກ້າວໆ.

**ຂ. ບັນຫາທີ່ຈະຕ້ອງແກ້ໄຂ**

ບັນດາກົດໝາຍໃນຂົງເຂດການປົກຄອງ ຂອງ ສ.ປ.ປ. ລາວ ໃນໄລຍະຜ່ານມາ ເຖິງປັດຈຸບັນ ເຫັນວ່າມີຈຸດດີຫຼາຍດ້ານ ທີ່ເປັນພື້ນຖານ ອັນສຳຄັນໃນການປົກຄອງ-ບໍລິຫານລັດ ຊຶ່ງບັນດາກົດໝາຍເຫຼົ່ານັ້ນ ໄດ້ກາຍເປັນບ່ອນອີງອັນພື້ນຖານ ໃຫ້ແກ່ວຽກງານສ້າງກົດໝາຍວ່າດ້ວຍການປົກຄອງ, ແຕ່ຄຽງຄູ່ກັນນັ້ນ ຄວາມຮັບຮູ້-ເຂົ້າໃຈແຈ້ງທີ່ຍັງຈຳກັດ ກ່ຽວກັບການເຄື່ອນໄຫວວຽກງານປົກຄອງຂອງສັງຄົມ ລວມທັງບັນດາພະນັກງານ-ລັດຖະກອນ ກໍ່ຄືບັນດາອົງການຈັດຕັ້ງລັດຂັ້ນຕ່າງໆ. ສະນັ້ນ, ໃນຂະບວນການສ້າງກົດໝາຍວ່າດ້ວຍການປົກຄອງ ສະບັບນີ້ ຄະນະຮັບຜິດຊອບ ຈຶ່ງໄດ້ສ້າງແຜນການເຄື່ອນໄຫວໃນແຕ່ລະໄລຍະ, ມີການພົວພັນ-ປະສານສົມທົບແໜ້ນ ລະຫວ່າງ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງສ້າງເງື່ອນໄຂໃຫ້ການມີສ່ວນຮ່ວມຂອງປະຊາຊົນ ໃນການຄົ້ນຄວ້າສ້າງ ແລະ ທັງເປັນການສຶກສາແນວຄິດສັງຄົມ ກໍ່ຄືການໂຄສະນາເຜີຍແຜ່ຄວາມຮູ້-ຄວາມໝາຍຄວາມສຳຄັນ ຂອງ ການຄົ້ນຄວ້າສ້າງກົດໝາຍສະບັບດັ່ງກ່າວ.

ການພິຈາລະນາເນື້ອໃນ ຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ ໄດ້ອີງໃສ່ຄຸນລັກສະນະ ແລະ ຄວາມສອດຄ່ອງກັບສະພາວະຄວາມເປັນຈິງ ຂອງ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ເປັນເຄື່ອງມືທີ່ດີໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ປົກປ້ອງ ແລະ ເສີມຂະຫຍາຍສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ພ້ອມທັງ ຮັບປະກັນການເສີມຂະຫຍາຍ ສາຍພົວພັນຮ່ວມມືກັບບັນດາປະເທດໃນພາກພື້ນ ແລະ ສາກົນ ນັບມື້ ນັບກວ້າງຂວາງ ແລະ ແໜ້ນແຟ້ນຫຼາຍຍິ່ງຂຶ້ນ.

ກົດໝາຍສະບັບໃໝ່ ທີ່ຈະໄດ້ພິຈາລະນາຮັບຮອງປະກາດໃຊ້ໃນຕໍ່ໜ້ານີ້ ຈະໄດ້ຖືກນໍາໃຊ້ຢ່າງກວ້າງຂວາງເຂົ້າສູ່ຊີວິດຕົວຈິງຂອງສັງຄົມ, ຄວາມຮັບຮູ້-ເຂົ້າໃຈ ກ່ຽວກັບການປົກຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ການສ້າງແບບແຜນວິທີເຮັດວຽກ ຕາມກົດໝາຍຂອງລະບົບການເມືອງຂັ້ນຕ່າງໆ ນັບມື້ນັບດີຂຶ້ນ, ສະຕິເຄົາລົບ ແລະ ປະຕິບັດກົດໝາຍທົ່ວສັງຄົມ ໄດ້ຮັບການເຊີດຊູສູງຂຶ້ນຢ່າງບໍ່ຢຸດຢັ້ງ.

**ຄ. ຄວາມສ່ຽງທີ່ອາດຈະເກີດຂຶ້ນ**

ຈາກຄວາມສ່ຽງ ທີ່ມີສາເຫດໃນຕົວ ແລະ ນອກຕົວ, ແຕ່ສາເຫດຕົ້ນຕໍນັ້ນ ແມ່ນ ສ.ປ.ປ. ລາວ ຍັງບໍ່ທັນມີກົດໝາຍວ່າດ້ວຍການປົກຄອງ ຫຼື ປະມວນກົດໝາຍປົກຄອງ ທີ່ເປັນກົດໝາຍພື້ນຖານໃຫ້ແກ່ການເຄື່ອນໄຫວປົກຄອງ ຂອງ ອົງການປົກຄອງຂັ້ນຕ່າງໆ ນັບຕັ້ງແຕ່ຂັ້ນສູນກາງ ລົງຮອດຮອດຂັ້ນທ້ອງຖິ່ນ ຮາກຖານ ທີ່ເປັນລະບົບ.

❖ **ຂໍ້ມູນອ້າງອີງ ກ່ຽວກັບບັນຫາທີ່ເກີດຂຶ້ນ ແລະ ຄວາມສ່ຽງຕ່າງໆ**

ເຖິງວ່າພວກເຮົາ ໄດ້ມີຄວາມພະຍາຍາມພັດທະນາກົດໝາຍຢ່າງຕັ້ງໜ້າກໍ່ຕາມ, ແຕ່ເຫັນວ່າຍັງມີຫຼາຍອັນ ທີ່ຈະຕ້ອງໄດ້ປັບປຸງ ແລະ ແກ້ໄຂ ເປັນຕົ້ນແມ່ນການນໍາໃຊ້ກົດໝາຍ ເຂົ້າສູ່ຊີວິດຕົວຈິງຂອງສັງຄົມ ຍັງບໍ່ທັນເຮັດໄດ້ຢ່າງເລິກເຊິ່ງກວ້າງຂວາງ, ການເປັນເຈົ້າການປະຕິບັດກົດໝາຍຂອງຂະແໜງການ ຍັງບໍ່ທັນເຂັ້ມງວດ ແລະ ສັກສິດເທົ່າທີ່ຄວນ, ສະຕິເຄົາລົບກົດໝາຍຂອງສັງຄົມຍັງບໍ່ທັນສູງ, ການນໍາໃຊ້ກົດໝາຍປົນເປກັນ ລະຫວ່າງ ກົດໝາຍແພ່ງ, ກົດໝາຍປົກຄອງ, ກົດໝາຍອາຍາ; ປາກົດການລະເມີດກົດໝາຍຂອງພະນັກງານ, ລັດຖະກອນ, ປະຊາຊົນເຮົາ ຍັງມີຢ່າງແຜ່ຫຼາຍ (ມະຕິກອງປະຊຸມຄົບຄະນະຄັ້ງທີ 10 ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ X).

## 2.2. ຈຸດປະສົງ

ເພື່ອຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ໃນຂົງເຂດຕ່າງໆ ໃຫ້ເປັນອັນລະອຽດ ຄະນະເລຂາທິການສູນກາງພັກ ໄດ້ອອກມະຕິຕົກລົງວ່າດ້ວຍການຮັບຮອງເອົາ **09** ໂຄງການຄົ້ນຄວ້າວິທະຍາສາດສັງຄົມລະດັບຊາດ ສະບັບເລກທີ **108/ຄລສພ**, ລົງວັນທີ **08** ກັນຍາ **2012** ຊຶ່ງໃນນັ້ນ ມີຫົວຂໍ້ "**ສ້າງລັດທີ່ປົກຄອງດ້ວຍກົດໝາຍ ຢູ່ ສ.ປ.ປ. ລາວ**".

ກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ສືບຕໍ່ກໍານົດກ່ຽວກັບການສ້າງຄວາມໝັ້ນຄົງ ໃຫ້ແກ່ລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ ແລະ ປ່ຽນຊື່ຫົວຂໍ້ຈາກ "ສ້າງລັດແຫ່ງກົດໝາຍ" ມາເປັນ "ສ້າງລັດທີ່ປົກຄອງດ້ວຍກົດໝາຍ ຢູ່ ສ.ປ.ປ. ລາວ" ໂດຍຍຶດໝັ້ນຕາມຫຼັກການ ພັກນໍາພາ ແລະ ກໍາອໍານາດຕາມກົດໝາຍ; ລັດຄຸ້ມຄອງສັງຄົມດ້ວຍກົດໝາຍ; ປະຊາຊົນເປັນເຈົ້າ, ສະເໝີພາບຕໍ່ໜ້າກົດໝາຍ; ເພີ່ມປະສິດທິພາບການບໍລິຫານລັດຂັ້ນສູນກາງກັບການສືບຕໍ່ປະຕິບັດທິດນໍາ **3** ສ້າງຢ່າງແຂງແຮງ.

ການສ້າງກົດໝາຍວ່າດ້ວຍການປົກຄອງ ສະບັບນີ້ຂຶ້ນມາ ເພື່ອນໍາໃຊ້ເປັນເຄື່ອງມືໜຶ່ງ ໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແລະ ບັນດາມະຕິກອງປະຊຸມໃຫຍ່ ໃຫ້ປາກົດຜົນເປັນຈິງຕາມມະຕິ ຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການຍົກສູງປະສິດທິພາບການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ ສະບັບເລກທີ **037/ຄບສພ**, ລົງວັນທີ **18** ມິຖຸນາ **2018**.

# 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

## 3.1. ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ

**ກ. ຜົນດີ**

ຈະບໍ່ສົ່ງຜົນສະທ້ອນຫຍັງໃຫ້ແກ່ການເຄື່ອນໄຫວວຽກງານປົກຄອງ ຂອງ ບັນດາພະນັກງານ-ລັດຖະກອນ ນັບຕັ້ງແຕ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ.

ຂ. ຜົນເສຍ

ການເຄື່ອນໄຫວວຽກງານປົກຄອງ ໃນປັດຈຸບັນຍັງຈະສືບຕໍ່ເຄື່ອນໄຫວວຽກງານຢ່າງສັບສົນ, ຂາດປະສິດທິພາບ, ການຈັດຕັ້ງກົງຈັກລັດ, ການບັນຈຸພະນັກງານ-ລັດຖະກອນເຂົ້າໃສ່ອົງການຈັດຕັ້ງເຫຼົ່ານັ້ນຍັງຈະມີຄວາມສັບສົນ, ສິ້ນເປືອງງົບປະມານຂອງລັດ ຈຳນວນມະຫາສານ, ໜັກໄປກວ່ານັ້ນການລ່ວງລະເມີດສິດ, ໜ້າທີ່ຂອງອົງການຈັດຕັ້ງອື່ນ ກໍ່ຄືລະບຽບກົດໝາຍຕ່າງໆ ຍັງຈະສືບຕໍ່ຢ່າງທີ່ເປັນມາ.

## 3.2. ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກາ

ກ. ຜົນດີ

ຈະບໍ່ສົ່ງຜົນສະທ້ອນຫຍັງໃຫ້ແກ່ການເຄື່ອນໄຫວວຽກງານປົກຄອງ ຂອງ ບັນດາພະນັກງານ-ລັດຖະກອນ ນັບຕັ້ງແຕ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ.

ຂ. ຜົນເສຍ

ການເຄື່ອນໄຫວວຽກງານປົກຄອງ ຂອງ ບັນດາພະນັກງານ-ລັດຖະກອນ ນັບຕັ້ງແຕ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ ຈະຍັງສືບຕໍ່ມີຄວາມຫຍຸ້ງຍາກສັບສົນ ຢ່າງບໍ່ມີບັນທັດຖານ ຫຼື ຍັງບໍ່ທັນເປັນການກໍ່ສ້າງປະຖົມປັດໄຈອັນສຳຄັນໃຫ້ແກ່ການພັດທະນາອົງການປົກຄອງ ໃນອະນາຄົດ.

## 3.3. ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກາ

ກ. ຜົນດີ

1) ເປັນການເພີ່ມທະວີການຊີ້ນຳ-ນຳພາ ຂອງ ສູນກາງພັກ, ລັດຖະບານ ແລະ ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງຂອງລັດໃຫ້ໜັກແໜ້ນ-ເຂັ້ມແຂງຂຶ້ນ;
2) ເປັນເຄື່ອງມືດ້ານນິຕິກຳ ທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ-ເຄື່ອນໄຫວ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງບັນດາອົງການຈັດຕັ້ງລັດ, ອົງການປົກຄອງ ນັບຕັ້ງແຕ່ຂັ້ນສູນກາງລົງຮອດຂັ້ນທ້ອງຖິ່ນ;
3) ເພື່ອນຳໃຊ້ເປັນເຄື່ອງມືໜຶ່ງ ໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃຫ້ປາກົດຜົນເປັນຈິງຕາມມະຕິ ຂອງ ຄະນະບໍລິຫານງານສູນກາງພັກ ວ່າດ້ວຍການຍົກສູງປະສິດທິພາບການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ ສະບັບເລກທີ **037**/ຄບສພ, ລົງວັນທີ **18** ມິຖຸນາ **2018**;
4) ເປັນເຄື່ອງມືໃນການຂົນຂວາຍທຶນຮອນ ແລະ ດຶງດູດຄວາມສົນໃຈຂອງສາກົນ ຕໍ່ການປົກຄອງລາວ, ການປັບປຸງ ກໍ່ຄືການພັດທະນາການປົກຄອງ ຂອງ ສ.ປ.ປ. ລາວ;
5) ສົ່ງເສີມຫຼັກນິຕິທຳໃນທົ່ວສັງຄົມລາວ ໃຫ້ສູງເດັ່ນຂຶ້ນ.

ຂ. ຜົນເສຍ

1. ນຳໃຊ້ງົບປະມານຂອງລັດ ແລະ ການຊ່ວຍເຫຼືອຂອງຕ່າງປະເທດຫຼາຍພໍສົມຄວນ ເຂົ້າໃນຂະບວນການຄົ້ນຄວ້າສ້າງກົດໝາຍ ແລະ ການໂຄສະນາເຜີຍແຜ່ກົດໝາຍສະບັບດັ່ງກ່າວ;
2. ມີຄວາມຫຍຸ້ງຍາກເບື້ອງຕົ້ນໃນການຈັດຕັ້ງປະຕິບັດ ໂດຍສະເພາະແມ່ນການປັບໃໝ-ການຮ້ອງຟ້ອງຢ່າງສັບສົນ, ການລົງວິໄນຕ່າງໆ.

## 3.4. ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ

### 3.4.1. ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ

ຖ້າຫາກ ສ.ປ.ປ. ລາວ ມີກົດໝາຍວ່າດ້ວຍການປົກຄອງແລ້ວ ກົດໝາຍດັ່ງກ່າວ ກໍ່ຈະເປັນເຄື່ອງມືອັນສຳຄັນໃນການປົກຄອງລັດ-ຄຸ້ມຄອງສັງຄົມ ຢ່າງສັກສິດ ຊຶ່ງສາມາດຄາດຄະເນຜົນໄດ້ຮັບດັ່ງນີ້:

1. ເປັນພື້ນຖານໃຫ້ການເຄື່ອນໄຫວປົກຄອງ ຂອງ ອົງການປົກຄອງຂອງປະເທດເຮົາເຊັ່ນ: ການອອກນິຕິກຳປົກຄອງ, ສັນຍາປົກຄອງ, ການສ້າງແຜນພັດທະນາປະເທດ ແລະ ບັນຫາປົກຄອງອື່ນ ເປັນລະບົບ, ກົມກຽວ, ລວມສູນ, ຖືກຕ້ອງ, ມີປະສິດທິພາບ ແລະ ມີຄວາມເປັນເອກະພາບ;
2. ຍົກສູງຄຸນນະພາບການປົກຄອງ ແລະ ການບໍລິຫານລັດ; ເຮັດໃຫ້ການນຳໃຊ້ກົດໝາຍ ເວົ້າລວມ, ເວົ້າສະເພາະແມ່ນ ກົດໝາຍປົກຄອງ ຈະກຳນົດແຈ້ງ, ຊັດເຈນ ແລະ ບໍ່ປົນເປກັບການນຳໃຊ້ກົດໝາຍອື່ນ; ສ້າງຄວາມຮັບຮູ້ ແລະ ເຂົ້າໃຈທີ່ຖືກຕ້ອງ ກ່ຽວກັບນິຕິກຳ ແລະ ກົດໝາຍ ຢ່າງມີປະສິດທິຜົນ;
3. ການຮ້ອງຂໍການອອກນິຕິກຳປົກຄອງຂອງປະຊາຊົນເຊັ່ນ: ການອອກ ຫຼື ບໍ່ອອກໃບອະນຸຍາດຕ່າງໆ ຮັບປະກັນຄວາມຖືກຕ້ອງ ຕາມກົດໝາຍ, ສະດວກ, ວ່ອງໄວ, ໂປ່ງໃສ ແລະ ເຊື່ອຖືໄດ້;
4. ເປັນພື້ນຖານໃນການພິຈາລະນາຄະດີປົກຄອງຂອງສານປະຊາຊົນແຕ່ລະຂັ້ນ, ເຮັດໃຫ້ການດຳເນີນຄະດີປົກຄອງຖືກຕ້ອງ ແລະ ເປັນທຳ;
5. ເປັນພື້ນຖານ ໃນການກຳນົດຄ່າປັບໃໝ, ຄ່າທຳນຽມປົກຄອງ ໃຫ້ມີຄວາມຖືກຕ້ອງ, ສົມເຫດສົມຜົນ, ເອກະພາບ ໃນຂອບເຂດທົ່ວປະເທດ;
6. ເປັນພື້ນຖານ ກ່ຽວກັບຄວາມຮັບຜິດຊອບຂອງພະນັກງານ-ລັດຖະກອນ, ການຈັດຕັ້ງປົກຄອງລັດແຕ່ລະຂັ້ນ ຕໍ່ການເຄື່ອນໄຫວ ຫຼື ການກະທຳປົກຄອງທີ່ບໍ່ຖືກຕ້ອງ ຊຶ່ງໄດ້ກໍ່ຄວາມເສຍຫາຍ ໃຫ້ແກ່ປະຊາຊົນ ແລະ ປະເທດຊາດ ຕາມກົດໝາຍ;
7. ເປັນພື້ນຖານໃຫ້ແກ່ການປັບປຸງກົດໝາຍປົກຄອງອື່ນເຊັ່ນ: ກົດໝາຍວ່າດ້ວຍລັດຖະບານ, ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການກໍ່ສ້າງ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍລ່ວຍສາອາກອນ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍການກໍ່ສ້າງ ແລະ ກົດໝາຍປົກຄອງອື່ນ ໃຫ້ສອດຄ່ອງຍິ່ງຂຶ້ນ ກໍ່ຄືການສ້າງກົດໝາຍປົກຄອງອື່ນ ທີ່ຈຳເປັນຕື່ມອີກໃນຕໍ່ໜ້າ.

ນິຕິກຳທີ່ຈະສ້າງ ຫຼື ປັບປຸງ ນອນຢູ່ໃນປະເພດນິຕິກຳທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກຳບໍ່?
☑ ແມ່ນ ☐ ບໍ່ແມ່ນ

**3.4.2. ການປັບປຸງຮ່າງນິຕິກຳ**

ຍັງບໍ່ທັນໄດ້ມີການປັບປຸງເທື່ອ.

**3.4.3. ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ**

☐ ຈຳກັດ ☑ ບໍ່ຈຳກັດ

**3.4.4. ພັນທະຕໍ່ສາກົນ**

☐ WTO ☐ AEC ☐ FTA ☑ ອື່ນໆ (ບໍ່ພົວພັນ)

**3.4.5. ນິຕິກຳ ທີ່ພົວພັນ**

**3.4.5.1 ນິຕິກຳພາຍໃນປະເທດ**

**3.4.5.1.1 ລັດຖະທຳມະນູນ, ປະມວນກົດໝາຍ ແລະ ກົດໝາຍ**

1) ລັດຖະທຳມະນູນ ແຫ່ງ ສ.ປ.ປ. ລາວ (ສະບັບປັບປຸງ ປີ 2015);
2) ປະມວນກົດໝາຍອາຍາ (ປີ 2017);
3) ປະມວນກົດໝາຍແພ່ງ (ປີ 2019);

4) ກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ ປີ 2016);
5) ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ ປີ 2015);
6) ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ (ປີ 2015);
7) ກົດໝາຍ ວ່າດ້ວຍຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ ປີ 2015);
8) ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ ປີ 2017);
9) ກົດໝາຍ ວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ ປີ 2016);
10) ກົດໝາຍ ວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015);
11) ກົດໝາຍ ວ່າດ້ວຍສະພາປະຊາຊົນ ຂັ້ນແຂວງ (ປີ 2015);
12) ກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນ ຂັ້ນແຂວງ (ສະບັບປັບປຸງ ປີ 2015);
13) ກົດໝາຍ ວ່າດ້ວຍການຕິດຕາມກວດກາ ຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2016);
14) ກົດໝາຍ ວ່າດ້ວຍສານປະຊາຊົນ (ສະບັບປັບປຸງ ປີ 2017);
15) ກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ ປີ 2017);
16) ກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012);
17) ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ ປີ 2017);
18) ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ ປີ 2016);
19) ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2018);
20) ກົດໝາຍ ວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ (ສະບັບປັບປຸງ ປີ 2005);
21) ກົດໝາຍ ວ່າດ້ວຍຜັງເມືອງ (ສະບັບປັບປຸງ ປີ 2017);
22) ກົດໝາຍ ວ່າດ້ວຍທະບຽນສານ (ສະບັບປັບປຸງ ປີ 2019);
23) ກົດໝາຍ ວ່າດ້ວຍທະບຽນຄອບຄົວ (ສະບັບປັບປຸງ ປີ 2019);
24) ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ປີ 2012);
25) ກົດໝາຍ ວ່າດ້ວຍວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ (ສະບັບປັບປຸງ ປີ 2014);
26) ກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ (ສະບັບປັບປຸງ ປີ 2017);
27) ກົດໝາຍ ວ່າດ້ວຍພັນທະປ້ອງກັນຊາດ (ສະບັບປັບປຸງ ປີ 2013);
28) ກົດໝາຍ ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ ປີ 2018);
29) ກົດໝາຍ ວ່າດ້ວຍສານທະຫານ (ປີ 2014);
30) ກົດໝາຍ ວ່າດ້ວຍອົງການໄອຍະການທະຫານ (ປີ 2014);
31) ກົດໝາຍ ວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ (ປີ 2018);
32) ກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ ປີ 2009)
33) ກົດໝາຍ ວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ ປີ 2012);
34) ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ (ສະບັບປັບປຸງ ປີ 2012);
35) ກົດໝາຍ ວ່າດ້ວຍການຈະລາຈອນທາງບົກ (ສະບັບປັບປຸງ ປີ 2012);
36) ກົດໝາຍ ວ່າດ້ວຍປ້າຍ (ປີ 2018);
37) ກົດໝາຍ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ (ປີ 2012);
38) ກົດໝາຍ ວ່າດ້ວຍການກໍ່ສ້າງ (ສະບັບປັບປຸງ ປີ 2009);
39) ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ ປີ 2016);

40) ກົດໝາຍ ວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບ (ປີ 2018);
41) ກົດໝາຍ ວ່າດ້ວຍການບິນພົນລະເຮືອນ (ສະບັບປັບປຸງ ປີ 2018);
42) ກົດໝາຍ ວ່າດ້ວຍການລົດໄຟ (ປີ 2019);
43) ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ ປີ 2015);
44) ກົດໝາຍ ວ່າດ້ວຍການລົງທຶນຂອງລັດ (ປີ 2016);
45) ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ (ປີ 2017);
46) ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ ປີ 2016);
47) ກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ ປີ 2020);
48) ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ ປີ 2018);
49) ກົດໝາຍ ວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ ປີ 2019);
50) ກົດໝາຍ ວ່າດ້ວຍຄຸ້ມຄອງສ່ວຍສາອາກອນ (ປີ 2019);
51) ກົດໝາຍ ວ່າດ້ວຍອາກອນລາຍໄດ້ (ປີ 2019);
52) ກົດໝາຍ ວ່າດ້ວຍອາກອນຊົມໃຊ້ (ປີ 2019);
53) ກົດໝາຍ ວ່າດ້ວຍກະສິກໍາ (ປີ 1998);
54) ກົດໝາຍ ວ່າດ້ວຍກໍາມະສິດ (ປີ 1990);
55) ກົດໝາຍ ວ່າດ້ວຍການປະມົງ (ປີ 2009);
56) ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະກອນນໍ້າ (ສະບັບປັບປຸງ ປີ 2012);
57) ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ ປີ 2019);
58) ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ ປີ 2019);
59) ກົດໝາຍ ວ່າດ້ວຍການຄຸ້ມຄອງໄພພິບັດ (ປີ 2019);
60) ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ ປີ 2013);
61) ກົດໝາຍ ວ່າດ້ວຍສັດນໍ້າ ແລະ ສັດປ່າ (ປີ 2007);
62) ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ (ສະບັບປັບປຸງ ປີ 2016);
63) ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ (ປີ 2014);
64) ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ (ປີ 2016);
65) ກົດໝາຍ ວ່າດ້ວຍຄວາມສະເໝີພາບຍິງ-ຊາຍ (ປີ 2019);
66) ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ (ປີ 2004);
67) ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ (ປີ 2016);
68) ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກໍາທາງລະບົບຄອມພິວເຕີ້ (ປີ 2015);
69) ກົດໝາຍ ວ່າດ້ວຍທາງຫຼວງ (ປີ 1999);
70) ກົດໝາຍ ວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ ປີ 2018);
71) ກົດໝາຍ ວ່າດ້ວຍສື່ມວນຊົນ (ສະບັບປັບປຸງ ປີ 2016);
72) ກົດໝາຍ ວ່າດ້ວຍວິສາຫະກິດ (ສະບັບປັບປຸງ ປີ 2013);
73) ກົດໝາຍ ວ່າດ້ວຍການປິ່ນປົວ (ປີສະບັບປັບປຸງ 2014);
74) ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ ປີ 2011);
75) ກົດໝາຍ ວ່າດ້ວຍການວັດແທກ (ສະບັບປັບປຸງ ປີ 2013);
76) ກົດໝາຍ ວ່າດ້ວຍມາດຕະຖານ (ສະບັບປັບປຸງ ປີ 2014);
77) ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ (ປີ 2010);

78) ກົດໝາຍ ວ່າດ້ວຍການທຸລະກຳທາງເອເລັກໂຕຣນິກ (ປີ 2012);
79) ກົດໝາຍ ວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ (ປີ 2017);
80) ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ (ປີ 2010);
81) ກົດໝາຍ ວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ ປີ 2013);
82) ກົດໝາຍ ວ່າດ້ວຍການສຶກສາ (ສະບັບປັບປຸງ ປີ 2015);
83) ກົດໝາຍ ວ່າດ້ວຍອາຊີວະສຶກສາ (ສະບັບປັບປຸງ ປີ 2019);
84) ກົດໝາຍ ວ່າດ້ວຍການສຶກສາຊັ້ນສູງ (ປີ 2020);
85) ກົດໝາຍ ວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ ປີ 2013);
86) ກົດໝາຍ ວ່າດ້ວຍຫຼັກຊັບ (ປີ 2012);
87) ກົດໝາຍ ວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ປີ 2017);
88) ກົດໝາຍ ວ່າດ້ວຍວຽກງານກາແດງ (ປີ 2017);
89) ກົດໝາຍ ວ່າດ້ວຍອຸຕຸນິຍົມ ແລະ ອຸທົກກະສາດ (ປີ 2017);
90) ກົດໝາຍ ວ່າດ້ວຍການໃຫ້ວັກຊີນກັນພະຍາດ (ປີ 2018);
91) ກົດໝາຍ ວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ (ປີ 2017);
92) ກົດໝາຍ ວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ (ປີ 2014);
93) ກົດໝາຍ ວ່າດ້ວຍການປະມົງ (ປີ 2009);
94) ກົດໝາຍ ວ່າດ້ວຍຊົນລະປະທານ (ປີ 2012);
95) ກົດໝາຍ ວ່າດ້ວຍນ້ຳປະປາ (ປີ 2009);
96) ກົດໝາຍ ວ່າດ້ວຍຫໍສະໝຸດ (ປີ 2012);
97) ກົດໝາຍ ວ່າດ້ວຍການປະກັນໄພ (ສະບັບປັບປຸງ ປີ 2011);
98) ກົດໝາຍ ວ່າດ້ວຍການບັນຊີ (ປີ 2004);
99) ກົດໝາຍ ວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ (ປີ 2014);
100) ກົດໝາຍວ່າດ້ວຍການປັບປຸງ ມາດຕາ 146 ຂອງ ກົດໝາຍວ່າດ້ວຍອາຍາ ແລະ ມາດຕາ 75, 76 ຂອງ ກົດໝາຍວ່າດ້ວຍຢາເສບຕິດ (ປີ 2012);
101) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2016);
102) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍສະພາປະຊາຊົນ ຂັ້ນແຂວງ ປີ 2015 (ສະບັບປັບປຸງ ປີ 2016);
103) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ປີ 2019);
104) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍສະພາປະຊາຊົນ ຂັ້ນແຂວງ (ປີ 2020);
105) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນ ຂັ້ນແຂວງ (ປີ 2020);
106) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ປີ 2020);

107) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ປີ 2020);

108) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ປີ 2020);

109) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ປີ 2020); [ແລະ] ກົດໝາຍສະບັບອື່ນໆ ອີກຈຳນວນໜຶ່ງ.

ນິຕິກຳໃຕ້ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງອີກຈຳນວນໜຶ່ງເຊັ່ນ:

(1). ລັດຖະບັນຍັດ ຂອງ ປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ (ສະບັບປັບປຸງ ປີ 2012);

(2). ດຳລັດຂອງລັດຖະບານ ແລະ ນິຕິກຳຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການແກ້ໄຂວຽກງານ, ບັນຫາ ຫຼື ຂໍ້ຂັດແຍ່ງຕ່າງໆ;

(3). ຂໍ້ຕົກລົງ ຂອງ ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າຕ່າງໆ ກ່ຽວກັບການຄຸ້ມຄອງການປຸກສ້າງ... ດັ່ງນີ້ເປັນຕົ້ນ.

ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

### 3.4.5.1 ນິຕິກຳ ຂອງ ຕ່າງປະເທດ (ຈຳນວນໜຶ່ງ)

1) ກົດໝາຍ ວ່າດ້ວຍການປົກຄອງ ຂອງ ສາທາລະນະລັດມົງໂກລີ (ວັນທີ 19 ມິຖຸນາ 2015, ມີຜົນສັກສິດ ວັນທີ 01 ກໍລະກົດ 2016) **General Administrative Law**;

2) ປະມວນກົດໝາຍແພ່ງ ຂອງ ສ.ປ. ຈີນ (ຮັບຮອງເອົາໃນວັນທີ 28 ພຶດສະພາ 2020, ເລີ່ມມີຜົນສັກສິດເມື່ອວັນທີ 01 ມັງກອນ 2021);

3) ກົດໝາຍ ວ່າດ້ວຍການດຳເນີນຄະດີປົກຄອງ ຂອງ ສາທາລະນະລັດ ປະຊາຊົນຈີນ (ສະບັບປັບປຸງ 27 ມິຖຸນາ 2017) **Administrative Litigation Law of the People's Republic of China (2017 Revision)**;

4) "ຮ່າງ" ກົດໝາຍວ່າດ້ວຍບົດລົງໂທດດ້ານບໍລິຫານ ຂອງ ສາທາລະນະລັດ ປະຊາຊົນຈີນ (ທີ່ຜ່ານການຮັບຮອງໃນກອງປະຊຸມ ຄັ້ງວັນທີ 22 ມັງກອນ 2021 ຊຶ່ງຈະມີຜົນສັກສິດເລີ່ມແຕ່ວັນທີ 15 ກໍລະກົດ 2021) **Law of the People's Republic of China on Administrative Penalty (2021 Revision)**;

5) "ຮ່າງ" ກົດໝາຍ ວ່າດ້ວຍການດຳເນີນຄະດີປົກຄອງ ຂອງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ (**Law on Administrative Procedure of Vietnam**);

6) ກົດໝາຍ ວ່າດ້ວຍການດຳເນີນຄະດີປົກຄອງ ຂອງ ສະຫະພັນເຢຍລະມັນ (ມີຜົນສັກສິດ ເມື່ອວັນທີ 01 ມັງກອນ 2002) **Administrative Procedure Act (Verwaltungsverfahrensgesetz, VwVfG)**;

7) ກົດໝາຍ ວ່າດ້ວຍການດຳເນີນຄະດີປົກຄອງ ຂອງ ຍີ່ປຸ່ນ (12 ພະຈິກ 1993), ບົດບັນຍັດເພີ່ມເຕີມ (ຄັ້ງວັນທີ 13 ມິຖຸນາ 2014 ແລະ ເລີ່ມມີຜົນສັກສິດ ເມື່ອວັນທີ 01 ເມສາ 2015) **Administrative Procedure Act**;

8) ກົດໝາຍ ວ່າດ້ວຍການດຳເນີນຄະດີປົກຄອງ ຂອງ ສາທາລະນະລັດແຊັກນີ້ (ປີ **2016**, ມີຜົນສັກສິດ **2018**) **Law on General Administrative Procedure**;
9) ກົດໝາຍ ວ່າດ້ວຍການດຳເນີນຄະດີການປົກຄອງ ຂອງ ສາທາລະນະລັດບົອສນີ້ແລະເຮີເຊີໂກວີນາ (**25** ມິຖຸນາ **2002**) **Law on Administrative Procedure of Bosnia and Herzegovina**;
10) ພຣະຣາຊະບັນຍັດ ວິທີປະຕິບັດຣາຊະການທາງປົກຄອງ ພ.ສ. **2539** ຂອງ ຣາຊະອານາຈັກໄທ (ວັນທີ **27** ກັນຍາ **2539** ຫຼືປີ ຄ.ສ. **1996**) ແລະ ແກ້ໄຂເພີ່ມເຕີມ ສະບັບທີ **3** ພ.ສ. **2562** ຫຼືປີ ຄ.ສ. **2019**);
11) ພຣະຣາຊະບັນຍັດ ກ່ຽວກັບການສ້າງຕັ້ງສານປົກຄອງ ແລະ ການດຳເນີນຄະດີຂອງສານປົກຄອງ ຣາຊະອານາຈັກໄທ **(Act on Establishment of Administrative Courts and Administrative Court Procedure of Thailand)** [ແລະ] ອື່ນໆ ອີກຈຳນວນໜຶ່ງ.

## 4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ

### 4.1. ສັງຄົມ

#### 4.1.1. ຜົນກະທົບ

ເປັນຄວາມເຂົ້າໃຈ ແລະ ເພີ່ມທະວີຄວາມຮັບຮູ້ສະຕິສັງຄົມ.

**ກ. ຜົນກະທົບທາງບວກ**

ສັງຄົມຈະມີຄວາມຮັບຮູ້-ເຂົ້າໃຈແຈ້ງຕື່ມກ່ຽວກັບລະບົບການປົກຄອງ, ການນຳໃຊ້ວິທີການປົກຄອງ, ການປັບໃໝ, ເພີ່ມສະຕິສັງຄົມສູງຂຶ້ນ, ການພົວພັນປະສານງານລະຫວ່າງບັນດາອົງການຈັດຕັ້ງລັດດ້ວຍກັນ, ການພົວພັນລະຫວ່າງອົງການຈັດຕັ້ງລັດກັບປະຊາຊົນ ແລະ ການມີສ່ວນຮ່ວມຂອງສັງຄົມຫຼາຍຂຶ້ນໃນວຽກງານປົກຄອງ.

**ຂ. ຜົນກະທົບທາງລົບ**

ອາດຈະມີການຕັ້ງຄຳຖາມຫຼາຍໃນສັງຄົມ ຕໍ່ກັບກົດໝາຍດັ່ງກ່າວວ່າກ່ຽວກັບຫຍັງ, ສາຍພົວພັນທາງດ້ານນິຕິໃນ ມີຄືແນວໃດຕໍ່ສັງຄົມ... ເຫຼົ່ານີ້ເປັນຕົ້ນ ຈຶ່ງຮຽກຮ້ອງໃຫ້ພາກສ່ວນຕ່າງໆ ເພີ່ມທະວີຄວາມເອົາໃຈໃສ່ໃຫ້ຄວາມຮູ້-ຄວາມເຂົ້າໃຈແກ່ສັງຄົມຫຼາຍຂຶ້ນຕື່ມ ແຕ່ໃນເວລາຈັ່ງ.

#### 4.1.2. ເງື່ອນໄຂໃນການປະຕິບັດນິຕິກຳ

ໃນການເຄື່ອນໄຫວວຽກງານປົກຄອງ ມີຄວາມຈຳເປັນຫຼາຍໃນການຈັດຕັ້ງ-ເຜີຍແຜ່ກົດໝາຍ, ໃຫ້ຄວາມຮູ້ສັງຄົມດ້ວຍຫຼາຍຮູບການເຊັ່ນ: ດ້ວຍການຈັດຝຶກອົບຮົມ, ການແຈ້ງການ, ການເຜີຍແຜ່ຕໍ່ສັງຄົມ... ດັ່ງນີ້ເປັນຕົ້ນ.

ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດນິຕິກຳ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ: ອາດບໍ່ມີສຳລັບບຸກຄົນ.

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ອາດບໍ່ມີສຳລັບບຸກຄົນ.

#### 4.1.3. ການທາບທາມຄຳເຫັນ

ກຸ່ມຄົນ (ຫຼື ຊຸມຊົນໃດໜຶ່ງ) ອາດຈະຖືກທາບທາມຄຳເຫັນ ແລະ ຜົນໄດ້ຮັບຈາກການທາບທາມຄຳເຫັນນັ້ນ ສ່ວນໃຫຍ່ອາດຈະເຫັນດີໃຫ້ມີການສ້າງ ກົດໝາຍວ່າດ້ວຍການປົກຄອງ **(Law on Public Administration** ຫຼື **Law on Governance)** ຫຼື ປະມວນກົດໝາຍ ປົກຄອງ **(Administrative Codes)** ໃນເງື່ອນໄຂທີ່ສຸກງອມ.

**4.1.4. ສະຫຼຸບ**

| ຕົວຊີ້ບອກຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດຳລົງຊີວິດຂອງບຸກຄົນ)* | ☑ | ☐ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼືປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

**4.2. ພາກທຸລະກິດ (ບໍ່ມີ)**

**4.2.1. ຜົນກະທົບ**

**ກ. ຜົນກະທົບທາງບວກ**

ໂດຍລວມແລ້ວ ຜົນກະທົບຕໍ່ພາກທຸລະກິດຂອງ ກົດໝາຍວ່າດ້ວຍການປົກຄອງ ຈະມີລັກສະນະຕັ້ງໜ້າຫຼາຍກວ່າ ແລະ ມີຜົນດີຕໍ່ສັງຄົມໂດຍລວ ຊຶ່ງບັນດາວິສາຫະກິດ ຫຼື ຫົວໜ່ວຍທຸລະກິດຕ່າງໆ ຈະສາມາດຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມກ່ຽວກັບການເຄື່ອນໄຫວອວຽກງານການປົກຄອງ ຂອງ ອົງການປົກຄອງ (ບັນດາອົງການບໍລິຫານລັດ).

**ຂ. ຜົນກະທົບທາງລົບ**

(ບໍ່ມີ)

**4.2.2. ເງື່ອນໄຂໃນການປະຕິບັດນິຕິກຳ**

ໃນການເຄື່ອນໄຫວອວຽກງານປົກຄອງ ມີຄວາມຈຳເປັນຫຼາຍໃນການຈັດຕັ້ງ-ເຜີຍແຜ່ກົດໝາຍ, ໃຫ້ຄວາມຮູ້ສັງຄົມດ້ວຍຫຼາຍຮູບການເຊັ່ນ: ດ້ວຍການຈັດຝຶກອົບຮົມ, ການແຈ້ງການ, ການເຜີຍແຜ່ຕໍ່ສັງຄົມ... ດັ່ງນີ້ເປັນຕົ້ນ.

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ອາດບໍ່ມີ;

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ອາດບໍ່ມີ.

**4.2.3. ການທາບທາມຄຳເຫັນ (ບໍ່ມີ)**

**4.2.4. ສະຫຼຸບ**

| ຕົວຊີ້ບອກ ຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບ ຜົນກະທົບ)* | ☑ | ☐ | ☐ |

| | | | |
|---|---|---|---|
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ)* | ☑ | ☐ | ☐ |
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບ ຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## 4.3. ລັດຖະບານ

### 4.3.1. ຜົນກະທົບ

ບັນດາອົງການຈັດຕັ້ງລັດ ແຕ່ລະຂັ້ນ ນັບຕັ້ງແຕ່ຂັ້ນສູນກາງ ຮອດຂັ້ນທ້ອງຖິ່ນ ມີຄວາມຈຳເປັນຫຼາຍໃນການຈັດຕັ້ງ-ເຜີຍແຜ່ກົດໝາຍ, ໃຫ້ຄວາມຮູ້ສັງຄົມດ້ວຍຫຼາຍຮູບການ ເຊັ່ນ: ການຈັດຕັ້ງກອງປະຊຸມເຜີຍແຜ່, ການຈັດຝຶກອົບຮົມ, ການອອກແຈ້ງການ, ການເຜີຍແຜ່ຕໍ່ສັງຄົມ... ດັ່ງນີ້ເປັນຕົ້ນ.

**ກ. ຜົນກະທົບທາງບວກ**

ສະມາຊິກລັດຖະບານ ມີຄວາມຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມກ່ຽວກັບວຽກງານປົກຄອງ-ການບໍລິຫານລັດຫຼາຍຂຶ້ນ ແລະ ສາມາດນຳພາການຈັດຕັ້ງ-ຜັນຂະຫຍາຍ ເນື້ອໃນຂອງກົດໝາຍວ່າດ້ວຍການປົກຄອງ ຢ່າງມີປະສິດທິພາບ-ປະສິດທິຜົນສູງ.

**ຂ. ຜົນກະທົບທາງລົບ**

ນຳໃຊ້ງົບປະມານແຫ່ງລັດຫຼາຍສົມຄວນ, ໄລຍະເວລາຈົ້ງ ແລະ ການບໍລິຫານລັດອາດຈະສັບສົນໃນເບື້ອງຕົ້ນ.

### 4.3.2. ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ

ອົງການຈັດຕັ້ງລັດ ແຕ່ລະຂັ້ນ ນັບທັງຂັ້ນສູນກາງ ລົງຮອດທ້ອງຖິ່ນ ຈະຕ້ອງໄດ້ໂຄສະນາເຜີຍແຜ່ ແລະ ນຳພາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກຄອງ ຫຼື ນິຕິກຳໃຕ້ກົດໝາຍຕ່າງໆ ໃນຂອບເຂດທົ່ວປະເທດ.

### 4.3.3. ການທາບທາມຄຳເຫັນ

ບັນດາກະຊວງ-ອົງການຈັດຕັ້ງລັດ ທີ່ມີສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນບັນດາກະຊວງ, ອົງການ ໃນຂົງເຂດການປົກຄອງ ໄດ້ປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານປົກຄອງຫຼາຍຍິ່ງຂຶ້ນ ນັບຕັ້ງແຕ່ຂະບວນການ ຄົ້ນຄວ້າສ້າງ "ຮ່າງ" ກົດໝາຍສະບັບນີ້ຂຶ້ນມາ.

#### 4.3.4. ສະຫຼຸບ

| ຕົວຊີ້ບອກຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງມີຕົກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☐ | ☑ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນການ ຢູ່ຂັ້ນແຂວງ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ)* | ☐ | ☑ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ)* | ☐ | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☐ | ☑ | ☐ |

## 5. ການຈັດຕັ້ງປະຕິບັດ

### 5.1. ການສະໜັບສະໜູນ ແກ່ບຸກຄົນ

ກົດໝາຍວ່າດ້ວຍການປົກຄອງ ທີ່ສະເໜີສ້າງຂຶ້ນໃໝ່ນີ້ ສ່ວນໃຫຍ່ແມ່ນບັນດາອົງການຈັດຕັ້ງລັດເປັນຜູ່ຈັດຕັ້ງປະຕິບັດໂດຍກົງ ຊຶ່ງບໍ່ໄດ້ກະທົບແຮງຕໍ່ບຸກຄົນ ຫຼື ສ້າງເງື່ອນໄຂໃໝ່ (ບັນຫາທີ່ເປັນອຸປະສັກ) ຕໍ່ບັນດາຫົວໜ່ວຍວິສາຫະກິດ ໃນການປະຕິບັດປົດບັນຍັດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນ "ຮ່າງ" ກົດໝາຍທີ່ສະເໜີສ້າງຂຶ້ນໃໝ່ນີ້.

### 5.2. ການສະໜັບສະໜູນແກ່ພາກທຸລະກິດ

ການຄົ້ນຄວ້າສ້າງກົດໝາຍວ່າດ້ວຍການປົກຄອງ ຈະບໍ່ສົ່ງຜົນກະທົບຕໍ່ບັນດາວິສາຫະກິດຂະໜາດ-ຂະໜາດກາງ ໃນການເຄື່ອນໄຫວທຸລະກິດ ເພາະວ່າບັນດາອົງການຈັດຕັ້ງ ລັດເປັນຜູ່ຈັດຕັ້ງປະຕິບັດ ເປັນສ່ວນໃຫຍ່ ຊຶ່ງບໍ່ໄດ້ກະທົບແຮງຕໍ່ບັນດາຫົວໜ່ວຍວິສາຫະກິດເຫຼົ່ານັ້ນ ໃນການປະຕິບັດປົດບັນຍັດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນ "ຮ່າງ" ກົດໝາຍດັ່ງກ່າວ.

## 5.3. ແຜນການຈັດຕັ້ງປະຕິບັດ

| ລ/ດ | ກິດຈະກຳ | | ກຳນົດເວລາ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| | | | 2020 | | | | 2021 | | | | 2022 | | | |
| | | | ຕມ 1 | ຕມ 2 | ຕມ 3 | ຕມ 4 | ຕມ 1 | ຕມ 2 | ຕມ 3 | ຕມ 4 | ຕມ 1 | ຕມ 2 | ຕມ 3 | ຕມ 4 |
| 1 | ການຄົ້ນຄວ້າ, ເກັບກຳຂໍ້ມູນ, ສ້າງຮ່າງເອກະສານຕ່າງໆ ທີ່ກ່ຽວຂ້ອງ ແລະ ຮ່າງເບື້ອງຕົ້ນເນື້ອໃນຂອງກົດໝາຍ | ການສ້າງຕັ້ງຄະນະຄົ້ນຄວ້າ | ■ | | | | | | | | | | | |
| | | ກອງປະຊຸມ ແລະ ການສຳມະນາ | | | | | | | | | | | | |
| | | ການທ້ອນໂຮມ, ແປກົດໝາຍທີ່ກ່ຽວຂ້ອງ | | | | ■ | | | | | | | | |
| | | ຈັດກອງປະຊຸມສຳ ມະນາ ກ່ຽວກັບ "ຮ່າງ" ກົດໝາຍປົກຄອງ | | | | | ■ | | | | | | | |
| | | ຈັດກອງປະຊຸມສຳມະນາທາງໄກ (Webinar) ກັບຊ່ຽວຊານ ຣາຊະອານາຈັກໄທ, ຈີນ ແລະ ຫວຽດນາມ | | | | | | | | | | ■ | | |
| | | ຈັດກອງປະຊຸມ ກ່ຽວກັບ "ຮ່າງ" ກົດໝາຍປົກຄອງ ສັງລວມເປັນສະບັບ ສົມບູນເບື້ອງຕົ້ນ ຂັ້ນພື້ນຖານ (ຫຼື ເອີ້ນວ່າເປັນ ສະບັບຮ່າງທີ I) | | | | | ■ | | | | | | | |
| | | ກະກຽມເນື້ອໃນ ໃຫ້ຄະນະຄົ້ນຄວ້າ ຮຽບຮຽງເນື້ອໃນຄືນ "ຮ່າງ" ກົດໝາຍວ່າດ້ວຍປົກຄອງ (ຮ່າງທີ II) | | | | | | ■ | | | | | | |
| | | ກະກຽມເນື້ອໃນ ໃຫ້ຄະນະຄົ້ນຄວ້າ ຮຽບຮຽງເນື້ອໃນຄືນ "ຮ່າງ" ກົດໝາຍວ່າດ້ວຍປົກຄອງ (ຮ່າງທີ III) | | | | | | | ■ | | | | | |
| | | ກອງປະຊຸມສຳມະນາທາງໄກ (Webinar) ກັບຊ່ຽວຊານເຢຍລະມັນ ແລະ ອົງການຈັດຕັ້ງສາກົນ | | | | | | | ■ | | | | | |
| | | ລາຍງານຜົນຂອງການຄົ້ນຄວ້າຕໍ່ ລັດຖະບານ ແລະ ສະພາແຫ່ງຊາດ | | | | | | | ■ | | | | | |
| 2 | ການສ້າງກົດໝາຍວ່າດ້ວຍການປົກຄອງ | ກອງປະຊຸມປຶກສາຫາລື 05 ຄັ້ງ (ທີ່ຕ່າງແຂວງ) | | | | | | | ■ | | | | | |
| | | ກອງປະຊຸມທາບທາມ 03 ພາກ | | | | | | | ■ | | | | | |
| | | ກອງປະຊຸມປັບປຸງເນື້ອໃນ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ (ສະບັບຮ່າງທີ IV) | | | | | | | ■ | | | | | |
| | | ເຮັດວຽກຮ່ວມກັບ ກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງ ແລະ ບັນດາກຳມາທິການຕ່າງໆ ທີ່ກ່ຽວຂ້ອງ ຂອງ ສະພາແຫ່ງຊາດ ຊຸດທີ IX ເພື່ອກວດກາຄວາມພ້ອມ | | | | | | | ■ | | | | | |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ຮອບດ້ານ ຂອງ "ຮ່າງ" ກົດໝາຍວ່າດ້ວຍການປົກຄອງ (ຫຼືຈັດຫຼາຍຄັ້ງ) | | | | | | | | | | | | |
| | | ກອງປະຊຸມປັບປຸງເນື້ອໃນ "ຮ່າງ" ກົດໝາຍ ວ່າດ້ວຍການປົກຄອງ (ສະບັບຮ່າງທີ V) ສົ່ງໃຫ້ ຫສນຍ | | | | | | | | | | | | |
| | | ຜ່ານ "ຮ່າງ" ກົດໝາຍ ຕໍ່ ກອງປະຊຸມລັດຖະບານ | | | | | | | | | | | | |
| | | ກອງປະຊຸມກັບສະມາຊິກສະພາແຫ່ງຊາດ | | | | | | | | | | | | |
| | | ຜ່ານກອງປະຊຸມສະພາແຫ່ງຊາດ ແລະ ຮັບຮອງ | | | | | | | | | | | | |
| | | ຈັດພິມ ແລະ ເຜີຍແຜ່ | | | | | | | | | | | | |

| | | **ກິດຈະກຳ** | **2020** | | | | **2021** | | | | **2022** | | | |
|---|---|---|---|---|---|---|---|---|---|---|---|---|---|---|
| | | | ຕມ 1 | ຕມ 2 | ຕມ 3 | ຕມ 4 | ຕມ 1 | ຕມ 2 | ຕມ 3 | ຕມ 4 | ຕມ 1 | ຕມ 2 | ຕມ 3 | ຕມ 4 |
| | **ການແລກປ່ຽນບົດຮຽນກ່ຽວກັບກົດໝາຍປົກຄອງ** | ສໍາມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ໃຫ້ອົງການປົກຄອງ, ອົງການໄອຍະການ, ສານປະຊາຊົນ **04** ແຂວງພາກເໜືອ (ແຂວງອຸດົມໄຊ, ຜົ້ງສາລີ, ຫຼວງນໍ້າທາ ແລະ ບໍ່ແກ້ວ), ແຂວງລະ **50** ທ່ານ (ລວມ **200** ທ່ານ) ທີ່ແຂວງອຸດົມໄຊ | | | | | | | | | | | | |
| | | ສໍາມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ໃຫ້ອົງການປົກຄອງ, ອົງການໄອຍະການ, ສານປະຊາຊົນ **04** ແຂວງພາກເໜືອ (ແຂວງຫຼວງພະບາງ, ໄຊຍະບູລີ, ຊຽງຂວາງ ແລະ ຫົວພັນ), ແຂວງລະ **50** ທ່ານ ລວມ **200** ທ່ານ ທີ່ນະຄອນ ຫຼວງພະບາງ ແຂວງຫຼວງພະບາງ | | | | | | | | | | | | |
| | | ສໍາມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ໃຫ້ອົງການປົກຄອງ, ອົງການໄອຍະການ, ສານປະຊາຊົນ **04** ແຂວງພາກກາງ (ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ໄຊສົມບູນ ແລະ ບໍລິຄໍາໄຊ) ແຂວງລະ **50** ທ່ານ ລວມ **200** ທ່ານ ທີ່ນະຄອນຫຼວງວຽງຈັນ | | | | | | | | | | | | |
| | | ສໍາມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ໃຫ້ອົງການປົກຄອງ, ອົງການໄອຍະການ, ສານປະຊາຊົນ **04** ແຂວງພາກກາງ (ແຂວງຄໍາມ່ວນ, ສະຫວັນນະເຂດ, ສາລະວັນ) ແຂວງລະ **50** ທ່ານ ລວມ **150** ທ່ານ ທີ່ແຂວງສະຫວັນນະເຂດ | | | | | | | | | | | | |

| ກິດຈະກຳ | 2020 | | | | 2021 | | | | 2022 | | | |
|---|---|---|---|---|---|---|---|---|---|---|---|---|
| | ຕມ 1 | ຕມ 2 | ຕມ 3 | ຕມ 4 | ຕມ 1 | ຕມ 2 | ຕມ 3 | ຕມ 4 | ຕມ 1 | ຕມ 2 | ຕມ 3 | ຕມ 4 |
| ສຳມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ທີ່ກະຊວງພາຍໃນ ແລະ ບັນດາອົງການຈັດຕັ້ງຂອງພັກ | | | | | | | | | | | | |
| ສຳມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ທີ່ມະຫາວິທະຍາໄລແຫ່ງຊາດ (ນະຄອນຫຼວງວຽງຈັນ) | | | | | | | | | | | | |
| ສຳມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ທີ່ມະຫາວິທະຍາໄລສຸພານຸວົງ (ແຂວງຫຼວງພະບາງ) | | | | | | | | | | | | |
| ສຳມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ທີ່ ມະຫາວິທະຍາໄລຈຳປາສັກ (ແຂວງຈຳປາສັກ) | | | | | | | | | | | | |
| ສຳມະນາວິທະຍາສາດ ກ່ຽວກັບກົດໝາຍປົກຄອງ ທີ່ສະຖາບັນຍຸຕິທຳແຫ່ງຊາດ (ນະຄອນຫຼວງວຽງຈັນ) | | | | | | | | | | | | |

**ລວມທັງໝົດ 03 ປີ**

ນອກຈາກນີ້ແລ້ວ, ຄະນະຮັບຜິດຊອບສ້າງກົດໝາຍວ່າດ້ວຍການປົກຄອງ ຍັງເຄື່ອນໄຫວຄົ້ນຄວ້າເນື້ອໃນ ຂອງ ບົດປະເມີນຜົນກະທົບຂອງ "ຮ່າງ" ກົດໝາຍສະບັບນີ້ ບົນພື້ນຖານເນື້ອໃນ ຂອງ ບົດສະເໜີເຫດຜົນ ແລະ ຄວາມຈຳເປັນຂອງການສ້າງກົດໝາຍ (ຕາມສະບັບເລກທີ 01/ພນ, ລົງວັນທີ 13 ສິງຫາ 2020), ບົດຄົ້ນຄວ້າບົດຮຽນຂອງຕ່າງປະເທດ ແລະ ການໄປທັດສະນະສຶກສາທີ່ຕ່າງປະເທດ; ບົດຄົ້ນຄວ້າວິຊາການບົດຮຽນການປົກຄອງ ຂອງ ສ.ປ.ປ. ລາວ; ບົດຄັດຈ້ອນບາງເນື້ອໃນ ຂອງ ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ລະບຽບການຕ່າງໆ ຈຳນວນໜຶ່ງ ທີ່ກ່ຽວຂ້ອງກັບເນື້ອໃນຂອງ "ຮ່າງ" ກົດໝາຍ ແລະ ວຽກງານຕ່າງໆ ທີ່ຈຳເປັນອີກຈຳນວນໜຶ່ງ.

### 5.4. ງົບປະມານ ແລະ ແຫຼ່ງທຶນ

ໃນການຈັດຕັ້ງ ແລະ ເຄື່ອນໄຫວສ້າງກົດໝາຍວ່າດ້ວຍການປົກຄອງສະບັບນີ້ ຕົ້ນຕໍແມ່ນນຳໃຊ້ແຫຼ່ງທຶນການຊ່ວຍເຫຼືອ ຂອງ ມູນນິທິຮັນໄຊເດັ້ນ **(Hanns Seidel Foundation)** ສະຫະພັນເຢຍລະມັນ ໂດຍຜ່ານການພົວພັນປະສານສົມທົບ ຂອງ ກົມແຜນການແລະຮ່ວມມືກັບຕ່າງປະເທດ ອົງການໄອຍະການປະຊາຊົນສູງສຸດ ແລະ ງົບປະມານບໍລິຫານລັດ ຈຳນວນໜຶ່ງ (ພາກ **63**) ຂອງ ພະແນກພັດທະນາລະບຽບການບໍລິຫານ ແລະ ນິຕິກຳ ກົມພັດທະນາການບໍລິຫານລັດ ກະຊວງພາຍໃນ.

### 5.5. ທົບທວນຄືນ

ຜ່ານການຈັດຕັ້ງ-ຜັນຂະຫຍາຍກົດໝາຍວ່າດ້ວຍການປົກຄອງ ໄດ້ໄລຍະໜຶ່ງແລ້ວ, ກະຊວງພາຍໃນ ຈະໄດ້ພົວພັນປະສານສົມທົບ ອົງການໄອຍະການປະຊາຊົນສູງສຸດ ໃນການທົບທວນຄືນ-ປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວ ໃນແຕ່ລະໄລຍະ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ໄດ້ກຳນົດ.

5.6. ການອະນຸມັດ

1. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ;

2. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ມີຄຳເຫັນຕໍ່ບົດປະເມີນຜົນ

**ຫົວໜ້າຄະນະຮັບຜິດຊອບສ້າງ ກົດໝາຍວ່າດ້ວຍການປົກຄອງ**